ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 2370 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 30 ກັນຍາ 2024

# ແຈ້ງການ

ເຖິງ
- ທ່ານ ຫົວໜ້າຫ້ອງການ, ຫົວໜ້າກົມ, ຜູ້ອໍານວຍການສະຖາບັນ, ສໍານັກພິມສຶກສາ ແລະ ກິລາ, ຫ້ອງການທຽບເທົ່າກົມ ແລະ ສູນຕ່າງໆ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ;
- ບັນດາ ທ່ານ ຫົວໜ້າສະຖາບັນຄົ້ນຄວ້າວິທະຍາສາດ.
- ທ່ານ ອະທິການບໍດີ ມະຫາວິທະຍາໄລ 5 ແຫ່ງ;
- ທ່ານ ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງວຽງຈັນ;
- ທ່ານ ຫົວໜ້າຫ້ອງການກໍາມະທິການສຶກສາສົງສຸນກາງ;
- ທ່ານ ປະທານ ສະມາຄົມການສຶກສາພາກເອກະຊົນ;
- ທ່ານ ຜູ້ອໍານວຍການ ສະຖານການສຶກສາ ແລະ ກິລາ ທັງພາກລັດ ແລະ ເອກະຊົນ;

**ເລື່ອງ**: ການຈັດຕັ້ງພິທີສະເຫຼີມສະຫຼອງວັນວິທະຍາສາດ ແຫ່ງຊາດ 12 ຕຸລາ ປະຈໍາປີ 2024.

- ອີງຕາມ ກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ (ສະບັບປັບປຸງ), ພາກທີ X, ມາດຕາ 60, ສະບັບເລກທີ 26/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງສຶກສາທິການ ແລະ ກິລາສະບັບເລກທີ 663/ນຍ ລົງວັນທີ 18 ພະຈິກ 2021;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ ຈັດງານສະເຫຼີມສະຫຼອງ ວັນວິທະຍາສາດ ແຫ່ງຊາດ 12 ຕຸລາ ສະບັບເລກທີ 4122/ສສກ, ລົງວັນທີ 17 ກໍລະກົດ 2024.

ກະຊວງສຶກສາທິການ ແລະ ກິລາ ຂໍແຈ້ງມາຍັງບັນດາທ່ານຊາບວ່າ ເພື່ອເຮັດໃຫ້ການຈັດຕັ້ງພິທີສະເຫຼີມສະຫຼອງວັນວິທະຍາສາດ ແຫ່ງຊາດ 12 ຕຸລາ ປະຈໍາປີ 2024 ໃຫ້ເຕັມໄປດ້ວຍຄວາມໝາຍ, ຄວາມສໍາຄັນ, ເປັນຂະບວນການກວ້າງຂວາງ ແລະ ມີບັນຍາກາດຟົດຟື້ນ ບົນພື້ນຖານການປະຫຍັດມັດທະຍັດ ແຕ່ຮັບປະກັນມີເນື້ອໃນເລິກເຊິ່ງ ແລະ ໜັກແໜ້ນ ພ້ອມທັງເປັນການສົ່ງເສີມວຽກງານການຄົ້ນຄວ້າວິທະຍາສາດ, ພັດທະນາ ເຕັກໂນໂລຊີ ແລະ ນະວັດຕະກໍາ ໃຫ້ທົ່ວສັງຄົມໄດ້ຮັບຮູ້ ແລະ ຜັນຂະຫຍາຍວຽກງານດັ່ງກ່າວເຂົ້າໃນຊີວິດຕົວຈິງ ໂດຍໃຫ້ຈັດຕັ້ງປະຕິບັດ ດັ່ງນີ້:

1. ໃຫ້ຈັດຕັ້ງສະເຫຼີມສະຫຼອງວັນວິທະຍາສາດ ແຫ່ງຊາດ 12 ຕຸລາ ໃນສະຖານການສຶກສາ ໂດຍເຊື້ອເຊີນໃຫ້ຄະນະນໍາຂອງຕົນ, ອົງການປົກຄອງທ້ອງຖິ່ນ, ຜູ້ປະກອບການ, ສະມາຄົມ ພໍ່-ແມ່ຜູ້ປົກຄອງນັກຮຽນ-ນັກສຶກສາ, ຄະນະພັດທະນາການສຶກສາແຕ່ລະຂັ້ນເຂົ້າຮ່ວມ ໂດຍມີຈຸດປະສົງເຊີດຊູກຽດ, ຜົນງານ ແລະ ຄຸນງາມຄວາມດີ ຂອງນັກ

ຄົ້ນຄວ້າ, ນັກວິທະຍາສາດ ແລະ ນັກປະດິດຕ່າງໆ ທີ່ໄດ້ເອົາໃຈໃສ່ເຂົ້າໃນການສຶກສາ ຄົ້ນຄວ້າວິທະຍາສາດ, ພັດທະນາ ເຕັກໂນໂລຊີ ແລະ ສ້າງນະວັດຕະກໍາ ເພື່ອຮັບໃຊ້ສັງຄົມ;

2. ສໍາລັບສະຖານການສຶກສາສາຍສາມັນ ໃຫ້ຈັດກິດຈະກໍາສະເຫຼີມສະຫຼອງວັນວິທະຍາສາດແຫ່ງຊາດ ໃຫ້ມີຄວາມຫຼາກຫຼາຍ ເປັນຕົ້ນ: ອ່ານບົດຖະແຫຼງການ ຫຼື ເປີດຄຼິບວິດີໂອຖະແຫຼງການຂອງ ທ່ານ ລັດຖະມົນຕີ, ຈັດສໍາມະນາ, ຕິດປ້າຍຄໍາຂວັນ **"ຊົມເຊີຍ ວັນວິທະຍາສາດແຫ່ງຊາດ 12 ຕຸລາ"**, ຈັດງານວາງສະແດງ, ສາທິດ ຫຼື ສະແດງການທົດລອງທາງວິທະຍາສາດ, ຈັດກິດຈະກໍາ ຖາມ-ຕອບ ດ້ານວິທະຍາສາດ, ການແຂ່ງຂັນກິລາ, ສິລະປະ-ວັນນະຄະດີ ທີ່ສະແດງໃຫ້ເຫັນຜົນງານການຄົ້ນຄວ້າວິທະຍາສາດ, ພັດທະນາເຕັກໂນໂລຊີ ແລະ ນະວັດຕະກໍາ ຂອງໂລກ ແລະ ພາຍໃນປະເທດ;

3. ສໍາລັບ ສະຖານການສຶກສາຊັ້ນສູງ, ສະຖານອາຊີວະສຶກສາ, ວິທະຍາໄລຄູ ແລະ ສະຖາບັນຄົ້ນຄວ້າວິທະຍາສາດ ຂອງບັນດາຂະແໜງການ ໃຫ້ເປັນເຈົ້າການໃນການສ້າງກິດຈະກໍາຕ່າງໆ ໃຫ້ມີເນື້ອໃນເລິກເຊິ່ງ ແລະ ກວ້າງຂວາງ ເປັນຕົ້ນແມ່ນຈັດສໍາມະນາ, ວາງສະແດງຜົນງານ ແລະ ການແຂ່ງຂັນ ທາງດ້ານວິທະຍາສາດ ແລະ ນະວັດຕະກໍາ ໃຫ້ເປັນຂະບວນຟົດຟື້ນ ໂດຍເຊື້ອເຊີນ ນັກຄົ້ນຄວ້າວິທະຍາສາດ ແລະ ນັກພັດທະນານະວັດຕະກໍາ ທັງພາຍໃນ ແລະ ຕ່າງປະເທດ ເຂົ້າຮ່ວມ, ເຊີນຜູ້ປະກອບການ, ຄູ່ຮ່ວມພັດທະນາ, ຄູອາຈານ, ນັກສຶກສາ ແລະ ຊຸມຊົນ ເຂົ້າຮ່ວມ ໂດຍສຸມໃສ່ "ການນໍາໃຊ້ ວິທະຍາສາດ ແລະ ນະວັດຕະກໍາ ເພື່ອສ້າງເສດຖະກິດເອກະລາດ ເປັນເຈົ້າຕົນເອງ" ຕາມເງື່ອນໄຂຕົວຈິງຂອງແຕ່ລະພາກສ່ວນ;

4. ການຈັດຕັ້ງກິດຈະກໍາສະເຫຼີມສະຫຼອງວັນວິທະຍາສາດແຫ່ງຊາດ ໃຫ້ສອດຄ່ອງຕາມທິດກະທັດຮັດ, ປະຢັດ ແລະ ເນັ້ນໃສ່ເນື້ອໃນເປັນຫຼັກ; ງົບປະມານໃຊ້ຈ່າຍ ການຈັດກິດຈະກໍາສະເຫຼີມສະຫຼອງວັນວິທະຍາສາດແຫ່ງຊາດ ແມ່ນໃຫ້ນໍາໃຊ້ງົບປະມານ ຂອງຂະແໜງການຕົນເອງ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງ ໂດຍອີງຕາມລະບຽບການທີ່ກ່ຽວຂ້ອງ;

5. ພາຍຫຼັງທີ່ໄດ້ສໍາເລັດໃນການຈັດຕັ້ງປະຕິບັດກິດຈະກໍາສະເຫຼີມສະຫຼອງວັນວິທະຍາສາດ ແຫ່ງຊາດ, ສະເໜີໃຫ້ແຕ່ລະພາກສ່ວນ ລາຍງານຜົນການຈັດຕັ້ງປະຕິບັດດັ່ງກ່າວ ໃຫ້ກົມຄຸ້ມຄອງວິທະຍາສາດ ໃນນາມກອງເລຂາວຽກງານວິທະຍາສາດ ເພື່ອສັງລວມ ລາຍງານ ຄະນະນໍາກະຊວງສຶກສາທິການ ແລະ ກິລາ ຮັບຊາບໃນເວລາອັນຄວນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຕາມແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ

ລັດຖະມົນຕີ

ຣສ. ປອ. ພຸດ ສິມມາລາວົງ

<u>ປອນສົ່ງ</u>

| | | |
|---|---|---|
| - | ທ່ານ ລັດຖະມົນຕີ | 1 ສະບັບ |
| - | ທ່ານ ຮອງ ລັດຖະມົນຕີ | 1 ສະບັບ |
| - | ທ່ານ ອະທິການບໍດີ ມະຫາວິທະຍາໄລ 5 ແຫ່ງ | 1 ສະບັບ |
| - | ບັນດາຫ້ອງການ, ກົມ, ສະຖາບັນ, ສູນ ທີ່ກ່ຽວຂ້ອງ | 1 ສະບັບ |
| - | ພວກກ່ຽວ | 1 ສະບັບ |
| - | ສໍາເນົາ | 1 ສະບັບ |